


**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ເປັນທະນາຄານທີ່ດຳເນີນການເຄື່ອນໄຫວອວຽກງານພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ. ທຄຕລ ມີຄວາມມຸ່ງໝັ້ນໃນການສ້າງປະໂຫຍດ ແລະ ອຳນວຍຄວາມສະດວກໃນການເຮັດທຸລະກຳທາງດ້ານການເງິນ ໃຫ້ແກ່ລູກຄ້າ. ປະຈຸບັນ ທຄຕລ ມີ **20** ສາຂາ ແລະ ຫຼາຍກວ່າ **80** ໜ່ວຍບໍລິການທົ່ວປະເທດ. ພວກເຮົາມີຄວາມຍິນດີ ແລະ ຕ້ອງການເພື່ອນຮ່ວມງານຈຳນວນໜຶ່ງ ເພື່ອເຂົ້າມາຮ່ວມສ້າງສາ ແລະ ພັດທະນາ ທຄຕລ ໃຫ້ມີຄວາມກ້າວໜ້າ ແລະ ເຕີບໃຫຍ່ໄປພ້ອມໆກັນ.

**ທຄຕລ ຕ້ອງການຮັບພະນັກງານຈຳນວນຫຼາຍຕຳແໜ່ງ, ລາຍລະອຽດມີດັ່ງນີ້:**

- **ວິຊາການ IT Support ສຳລັບ ທຄຕລ ສຳນັກງານໃຫຍ່ ຈຳນວນ 02 ຕຳແໜ່ງ ແລະ ສາຂາ ອຸດົມໄຊ, ສາຂາຄົງໂດກ ແລະ ສາຂາຈຳປາສັກ ສາຂາລະ 01 ຕຳແໜ່ງ**

- **ເງື່ອນໄຂຜູ້ສະໝັກ:** ເພດ: **ຍິງ ຫຼື ຊາຍ** ແລະ ມີອາຍຸບໍ່ເກີນ **30** ປີ.
- ✓ ມີມີໃບປະກາດຈົບລະດັບປະລິນຍາຕີຂຶ້ນໄປ ໃນສາຂາວິທະຍາສາດຄອມພິວເຕີ, ວິສະວະກຳຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ (ໄອທີ) ຈາກພາຍໃນ ຫລື ຕ່າງປະເທດ
- ✓ ມີຜົນຄະແນນການຮຽນ CGPA ແຕ່ **2.70/4.00** ຂື້ນໄປ
- ✓ ສາມາດສື່ສານພາສາອັງກິດ ( ເວົ້າ, ຂຽນ ແລະ ອ່ານ ) ໄດ້ໃນລະດັບດີ.
- ✓ ມີຄວາມຮູ້ກ່ຽວກັບການຕິດຕັ້ງ, ສ້ອມແປງ ແລະ ແກ້ໄຂບັນຫາອຸປະກອນໄອທີ Hardware ຕ່າງໆໄດ້ ເຊັ່ນ: ເຄື່ອງຄອມພິວເຕີ PC, Notebook, Printers, Servers ແລະ ອຸປະກອນໄອທີຣາດແວອື່ນໆ.
- ✓ ສາມາດຕິດຕັ້ງ ແລະ ແກ້ໄຂບັນຫາລະບົບປະຕິບັດການ Windows, Open Source ແລະ Application Software Program ຕ່າງໆໄດ້.
- ✓ ມີຄວາມຮູ້ດ້ານການຕິດຕັ້ງລະບົບເຄືອຂ່າຍພາຍໃນ, ພາຍນອກ ແລະ ສາມາດຕັ້ງຄ່າອຸປະກອນລະບົບຄວາມປອດໄພຕ່າງໆ.
- ✓ ສາມາດນຳໃຊ້ອຸປະກອນເຄື່ອງມືການຊ່າງ ແລະ ມີຄວາມຮູ້ທາງດ້ານລະບົບໄຟຟ້າອີເລັກໂຕຼນິກ ຍິ່ງເປັນການດີ.
- ✓ ສາມາດໄປປະຈຳການຢູ່ສາຂາໃດໜຶ່ງຂ້າງເທິງເປັນການຖາວອນ.
- ✓ ***ຖ້າເປັນຄົນທ້ອງຖິ່ນ ແລະ ມີເງື່ອນໄຂດ້ານສິ່ງອຳນວຍຄວາມສະດວກຢູ່ສາຂາ ຍິ່ງເປັນການດີ***

## ❖ <u>ວິຊາການ IT Programmer (ພະນັກງານໄອທີພັດທະນາ Program) 09 ຕຳແໜ່ງ</u>

❖ **<u>ເງື່ອນໄຂຜູ້ສະໝັກ:</u>** ເພດ: **ຍິງ ຫຼື ຊາຍ** ແລະ ມີອາຍຸບໍ່ເກີນ **35** ປີ.

- ✓ ມີໃບປະກາດຈົບລະດັບປະລິນຍາຕີຂຶ້ນໄປ ໃນສາຂາວິທະຍາສາດຄອມພິວເຕີ, ວິສະວະກຳຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ (ໄອທີ) ຈາກພາຍໃນ ຫລື ຕ່າງປະເທດ.
- ✓ ມີຜົນຄະແນນການຮຽນ CGPA ແຕ່ **2.50/4.00** ຂຶ້ນໄປ ແລະ ໃນແຕ່ລະພາກຮຽນ ວິຊາ Computer Programming ໃຫ້ມີຄະແນນ **B** ຂຶ້ນໄປ.
- ✓ ສາມາດສື່ສານພາສາອັງກິດ ( ເວົ້າ,ຂຽນ ແລະ ອ່ານ ) ໄດ້ໃນລະດັບດີ.
- ✓ ສາມາດນຳໃຊ້ຖານຂໍ້ມູນເຊັ່ນ: Mysql, Oracle ຫລືຖານຂໍ້ມູນອື່ນໄດ້.
- ✓ ສາມາດຂຽນ Application ເຊື່ອມຕໍ່ຖານຂໍ້ມູນໄດ້.
- ✓ ສາມາດພັດທະນາ Application ນຳໃຊ້ພາສາ JAVA ຫລື PHP ໄດ້ໃນລະດັບດີ, ຖ້າມີປະສົບການ, ມີຜົນງານສາມາດພັດທະນາ Web/Mobile Application ຍິ່ງເປັນການດີ.
- ✓ ຖ້າມີໃບຢັ້ງຢືນ OCJP ຫລື ມີໃບຢັ້ງຢືນອື່ນໆທີ່ກ່ຽວຂ້ອງກັບການຂຽນໂປຼແກຼມ ຍິ່ງເປັນການດີ.

## ❖ <u>ວິຊາການ IT Network and Security ຈຳນວນ 03 ຕຳແໜ່ງ</u>

❖ **<u>ເງື່ອນໄຂຜູ້ສະໝັກ:</u>** ເພດ: **ຍິງ ຫຼື ຊາຍ** ແລະ ມີອາຍຸບໍ່ເກີນ **35** ປີ.

- ✓ ມີໃບປະກາດຈົບລະດັບປະລິນຍາຕີຂຶ້ນໄປ ໃນສາຂາວິທະຍາສາດຄອມພິວເຕີ, ວິສະວະກຳຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ (ໄອທີ) ຈາກພາຍໃນ ຫລື ຕ່າງປະເທດ.
- ✓ ມີຜົນຄະແນນການຮຽນ CGPA ແຕ່ **2.50/4.00** ຂຶ້ນໄປ ແລະ ຄະແນນວິຊາທີ່ກ່ຽວກັບ Networking, Information Security ແລະ Server Administrator ຕ້ອງມີຄະແນນ **B** ຂຶ້ນໄປ.
- ✓ ມີປະສົບການກ່ຽວກັບການຄຸ້ມຄອງ ແລະ ດູແລລະບົບເຄືອຂ່າຍ, ລະບົບຄວາມປອດໄພ ເຊັ່ນ: ດູແລອຸປະກອນ Cisco Switch, Router, Firewall ລວມເຖິງດູແລລະບົບ Server & Storage ຍິ່ງເປັນການດີ.
- ✓ ສາມາດສື່ສານພາສາອັງກິດ ( ເວົ້າ,ຂຽນ ແລະ ອ່ານ ) ໄດ້ໃນລະດັບດີ.
- ✓ ຖ້າມີໃບຢັ້ງຢືນອື່ນໆທີ່ກ່ຽວຂ້ອງກັບ Network ແລະ Security ຍິ່ງເປັນການດີ.

❖ **ວິຊາການ Teller ເພື່ອປະກອບໃຫ້ ສຳນັກງານໃຫຍ່, ສາຂາຜົ້ງສາລີ, ສາຂາບໍ່ແກ້ວ, ສາຂາອຸດົມໄຊ, ສາຂາຫຼວງນ້ຳທາ, ສາຂາຫຼວງພະບາງ ຈຳນວນຫຼາຍຕຳແໜ່ງ (ຈົບຈາກ ສປ ຈີນ ເທົ່ານັ້ນ)**

❖ **ເງື່ອນໄຂຜູ້ສະໝັກ:** ເພດ: **ຊາຍ ຫຼື ຍິງ** ແລະ ມີອາຍຸບໍ່ເກີນ **30** ປີ.

- ✓ ມີໃບປະກາດຈົບປະລິນຍາຕີຂຶ້ນໄປ **ຈົບຈາກ ສປ ຈີນ** ໃນສາຂາ ການເງິນ, ການທະນາຄານ, ບັນຊີ, ເສດຖະສາດ, ບໍລິຫານທຸລະກິດ, ການຄ້າ ທີ່ມີຄະແນນ **CGPA** ໂດຍສະເລ່ຍ **2.70/4.00 ຫຼື 6.75/10** ຂຶ້ນໄປ.
- ✓ **ມີໃບຢັ້ງຢືນລະດັບພາສາຈີນ HSK (Chinese Proficiency Test) ລະດັບ IV ຂຶ້ນໄປ.**
- ✓ ສາມາດສື່ສານພາສາອັງກິດ (ເວົ້າ, ຂຽນ, ອ່ານ) ລະດັບດີຍິ່ງເປັນການດີ.
- ✓ **ສາມາດໄປປະຈຳການໄລຍະຍາວ ຫຼື ເປັນການຖາວອນຢູ່ແຂວງໃດໜຶ່ງທີ່ກ່າວມາຂ້າງເທິງ.**
- ✓ ມີຄວາມຮູ້ພື້ນຖານການນຳໃຊ້ຄອມພິວເຕີ.
- ✓ ສາມາດເຮັດວຽກພາຍໃຕ້ໄລຍະເວລາທີ່ກຳນົດໃຫ້, ມີຄວາມອົດທົນທ້າວທັນ ແລະ ສາມາດເຮັດວຽກເປັນທີມໄດ້.

❖ **ຄຸນລັກສະນະຜູ້ສະໝັກວຽກກັບ ທຄຕລ ຕຳແໜ່ງ IT:**

- ✓ *ຊື່ສັດບໍລິສຸດຕໍ່ໜ້າທີ່ວຽກງານ, ມີມະນຸດສຳພັນ ແລະ ມີທັກສະໃນການສື່ສານທີ່ດີ;*
- ✓ *ກົງຕໍ່ເວລາ, ມີຄວາມຮັບຜິດຊອບສູງ ແລະ ມີນ້ຳໃຈເສຍສະຫຼະຕໍ່ວຽກສ່ວນລວມ;*
- ✓ *ມີພອນສະຫວັນ, ມີຄວາມສະດຸ້ງໄວ ແລະ ມີຈິດໃຈຮັກມັກໃນວຽກງານໄອທີ;*
- ✓ *ມີຈັນຍາບັນ ບໍ່ເປີດເຜີຍຄວາມລັບຂອງອົງກອນອອກສູ່ພາຍນອກ;*
- ✓ *ມີຄວາມສາມັກຄີ, ສາມາດເຮັດວຽກຮ່ວມກັນເປັນທີມງານໄດ້;*
- ✓ *ມີລະບຽບວິໄນ, ສຸພາບອ່ອນໂຍນ;*
- ✓ *ມີຈິດໃຈບຸກບືນທ້າວທັນ, ອົດທົນ, ສາມາດເຮັດວຽກນອກໂມງການໄດ້;*

❖ **ຄຸນລັກສະນະຜູ້ສະໝັກວຽກກັບ ທຄຕລ ຕຳແໜ່ງ Teller**

- ✓ *ຊື່ສັດບໍລິສຸດ, ມະນຸດສຳພັນດີ;*
- ✓ *ບຸກຄະລິກວ່ອງໄວທ້າວທັນ ແລະ ອົດທົນ;*
- ✓ *ລະອຽດຮອບຄອບ, ມີລະບຽບວິໄນ ແລະ ຮັບຜິດຊອບສູງ;*
- ✓ *ມີຄວາມສາມັກຄີ, ສາມາດເຮັດວຽກເປັນທີມໄດ້;*
- ✓ *ສາມາດເຮັດວຽກພາຍໃຕ້ຄວາມກົດດັນ;*
- ✓ *ມີໃຈຮັກໃນວຽກງານບໍລິການ;*
- ✓ *ກົງຕໍ່ເວລາ ແລະ ມີຄວາມເສຍສະຫຼະ.*

❖ **<u>ວິທີສະໝັກວຽກ:</u> ຜູ້ທີ່ມີເງື່ອນໄຂຄົບຖ້ວນຕາມການປະກາດ ແລະ ມີຄວາມສົນໃຈທີ່ຈະສະໝັກວຽກໃນຕຳແໜ່ງດັ່ງກ່າວ ໃຫ້ເອົາໃຈໃສ່ປະຕິບັດຕາມຂັ້ນຕອນດັ່ງນີ້:**

*1)* ຜູ້ສະໝັກຕ້ອງກວດກາເງື່ອນໄຂຕົນເອງ ກັບ ເງື່ອນໄຂຕຳແໜ່ງງານທີ່ຈະສະໝັກໃຫ້ລະອຽດວ່າຕົນເອງຖືກຕາມເງື່ອນໄຂຂອງຕຳແໜ່ງງານທີ່ລະບຸຢ່າງຄົບຖ້ວນແລ້ວ ຫຼື ບໍ່.

*2)* ພາຍຫຼັງໄດ້ຕຳແໜ່ງທີ່ຕ້ອງການ ແລະ ຖືກຕ້ອງຕາມເງື່ອນໄຂແລ້ວ ໃຫ້ດາວໂຫຼດຟອມສະໝັກວຽກໄດ້ທີ່ເວັບໄຊສ໌ ຂອງ ທຄຕລ www.bcel.com.la ເຂົ້າໄປທີ່ສະໝັກງານ> ດາວໂຫຼດຟອມສະໝັກວຽກ. **<u>ໝາຍເຫດ: ຟອມສະໝັກງານຕ້ອງ ດາວໂຫຼດຈາກເວັບໄຊສ໌ ເທົ່ານັ້ນ ຈະບໍ່ມີການຂາຍ ຫຼື ແຈກຟອມຢູ່ ທຄຕລ.</u>**

*3)* ຕື່ມຂໍ້ມູນຟອມສະໝັກທີ່ດາວໂຫຼດ ແລະ ປະກອບເອກະສານໃຫ້ຄົບຖ້ວນດັ່ງນີ້:

- ✓ ຊີວະປະຫວັດຝັນຜົາ 3 ໜ້າ (ກາແດງ ແລະ ບໍ່ເກີນ 3 ເດືອນ)
- ✓ ຮູບຖ່າຍ 3x4 ຈຳນວນ **4** ໃບ (ບໍ່ເກີນ 3 ເດືອນ).
- ✓ ສຳເນົາບັດປະຈຳຕົວ ແລະ ສຳມະໂນຄົວ.
- ✓ ສຳເນົາໃບປະກາດວິຊາສະເພາະ ແລະ ຄະແນນ.
- ✓ ຄ່າທຳນຽມໃນການສະໝັກ ຈຳນວນ 10.000 ກີບ.
- ✓ ສຳເນົາໃບປະກາດ ມໍ ປາຍ.
- ✓ ໃບກວດສຸຂະພາບ (ກາແດງ ແລະ ບໍ່ເກີນ 6 ເດືອນ).
- ✓ ໃບຢັ້ງຢືນຄໍ້າປະກັນ (ກາແດງ ແລະ ບໍ່ເກີນ 3 ເດືອນ).
- ✓ ໃບແຈ້ງໂທດ (ກາແດງ ແລະ ບໍ່ເກີນ 3 ເດືອນ).
- ✓ ໃບຢັ້ງຢືນທີ່ຢູ່ (ກາແດງ ແລະ ບໍ່ເກີນ 3 ເດືອນ).

*4)* ນັກສອບເສັງທຸກທ່ານຕ້ອງເອົາໃຈໃສ່ປະກອບເອກະສານໃຫ້ຄົບຖ້ວນຕາມ ແລະ ຖືກຕາມເງື່ອນໄຂ ທີ່ທະນາຄານ ໄດ້ລະບຸໄວ້ດ້ານເທິງ.

*1)* ພາຍຫຼັງສຳເລັດປະກອບຟອມສະໝັກງານ ແລະ ເອກະສານຕ່າງໆ ຢ່າງຄົບຖ້ວນ ທ່ານສາມາດນຳສົ່ງເອກະສານໄດ້ທີ່ **ພະແນກຈັດຕັ້ງ-ພະນັກງານ, ທຄຕລ ສຳນັກງານໃຫຍ່ ຕຶກ C, ຊັ້ນ 4** ໃນໂມງລັດຖະການ ເວລາ **08:30 – 15:30** ໂມງ, ໂທ: ***021 213 200-417***, ສຳລັບສາຂາ ແມ່ນສາມາດສົ່ງເອກະສານໄດ້ຢູ່ສຳນັກງານໃຫຍ່ ຫຼື ສາຂາກ່ຽວຂ້ອງໄດ້, ສາຂາຜົ້ງສາລີ 088 210224; ສາຂາບໍ່ແກ້ວ 084 212162; ສາຂາຫຼວງນໍ້າທາ 086 211316; ສາຂາອຸດົມໄຊ 081 211260 ແລະ ສາຂາຫຼວງພະບາງ 071 252814.

*5)* ສຳລັບຕຳແໜ່ງ IT ແມ່ນເລີ່ມຮັບເອກະສານນັບແຕ່ ***<u>ວັນທີ 01/06/2018</u>*** *<u>ເປັນຕົ້ນໄປ ໂດຍໃຫ້ຖືໃບປະກາດວິຊາສະເພາະ ແລະ ໃບຄະແນນສະບັບຕົ້ນມາພ້ອມ.</u>*

*6)* *<u>ສຳລັບຕຳແໜ່ງ Teller</u>* ແມ່ນເລີ່ມຮັບເອກະສານນັບແຕ່ ***<u>ວັນທີ 01-15/06/2018</u>*** *<u>ໂດຍໃຫ້ຖືໃບປະກາດວິຊາສະເພາະ, ໃບຢັ້ງຢືນລະດັບພາສາຈີນ ແລະ ໃບຄະແນນສະບັບຕົ້ນມາພ້ອມ.</u>*

*7)* ***<u>ໝາຍເຫດ:</u>*** *ຜູ້ສະໝັກ **01** ຄົນ ສາມາດຍື່ນເອກະສານສະໝັກວຽກໄດ້ **01** ຕາແໜ່ງ/**01** ພາກສ່ວນ ເທົ່ານັ້ນ ແລະ ທຄຕລ ຈະບໍ່ພິຈາລະນາຟອມສະໝັກທີ່ບໍ່ຄົບເງື່ອນໄຂ ຫຼື ເອກະສານບໍ່ຄົບຕາມທີ່ໄດ້ປະກາດ.*

**ນະຄອນຫຼວງວຽງຈັນ, ວັນທີ 28/05/2018**

**ຫົວໜ້າພະແນກຈັດຕັ້ງ-ພະນັກງານ**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ພະແນກ ຈັດຕັ້ງແລະພະນັກງານ

**ຄຳສະຫວັນ ອຸດທະຈັກ**